ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ ເລກທີ 0272 /ກຂອ

ນະຄອນຫຼວງວຽງຈັນ, ວັນທີ 25 ມັງກອນ 2011

## ບົດແນະນຳ
## ວ່າດ້ວຍການຂາຍໄມ້ ແລະ ການເຄື່ອນຍ້າຍໄມ້
## ພາຍໃຕ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ (FSC)

- ອີງຕາມຂໍ້ຕົກລົງ ສະບັບເລກທີ 2456/ອຄ.ຈພງ ລົງວັນທີ 25 ທັນວາ 2009 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມການນຳເຂົ້າ ແລະ ສົ່ງອອກ.
- ອີງຕາມຂໍ້ຕົກລົງ ສະບັບເລກທີ 0180/ອຄ.ຈພງ ລົງວັນທີ 02 ກຸມພາ 2009 ວ່າດ້ວຍ ການແຕ່ງຕັ້ງ ແລະ ມອບຄວາມຮັບຜິດຊອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ໃນການຈັດຕັ້ງປະຕິບັດໂຄງການຈັດສັນປ່າຜະລິດ ແລະ ພັດທະນາຊົນນະບົດ ໃນໄລຍະ 2009-2011.
- ອີງຕາມຂໍ້ຕົກລົງ ສະບັບເລກທີ 1976/ອຄ.ກຂອ, ລົງວັນທີ 06 ຕຸລາ 2010 ວ່າດ້ວຍວິທີການຂາຍໄມ້ ແລະ ການເຄື່ອນຍ້າຍໄມ້ ພາຍໃຕ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ (FSC)

**ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ ອອກບົດແນະນຳ:**

### 1. ຈຸດປະສົງ

ບົດແນະນຳສະບັບນີ້ ວາງອອກເພື່ອສົ່ງເສີມການຜະລິດ ແລະ ການສົ່ງອອກຜະລິດຕະພັນອຸດສາຫະກຳປຸງແຕ່ງໄມ້ ພາຍໃຕ້ມາດຕະຖານ ຂອງສະພາບໍລິຫານປ່າໄມ້ສາກົນ (FSC) ທັງເພື່ອເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາປ່າໄມ້ແບບຍືນຍົງ, ເຮັດໃຫ້ລະບົບການຢັ້ງຢືນແຫຼ່ງທີ່ມາຂອງໄມ້ມີຄວາມສົມບູນ ແລະ ຮັບປະກັນຄວາມຕໍ່ເນື່ອງຂອງລະບົບໃຫ້ສາມາດສືບຄືນ ແລະ ຢັ້ງຢືນເຖິງແຫຼ່ງທີ່ມາຂອງໄມ້ໄດ້. ເພື່ອເປັນການສ້າງຜົນປະໂຫຍດຮ່ວມກັນລະຫວ່າງຜູ້ປະກອບການ ແລະ ພາກລັດໃນການສ້າງມູນຄ່າເພີ້ມໃຫ້ແກ່ຜະລິດຕະພັນໄມ້ຈາກ ສປປ ລາວ ໃຫ້ມີຄວາມສາມາດໃນການເຂົ້າເຖິງຕະຫຼາດສາກົນ ເພື່ອເຮັດໃຫ້ທຸລະກິດໄມ້ກາຍເປັນທ່າແຮງໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.